ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

## ກອງປະຊຸມປຶກສາຫາລື ບາງວຽກງານຂົງເຂດຂອງທະນາຄານແຫ່ງ ສປປ ລາວ




ໃນວັນທີ 13 ຕຸລາ 2023, ທີ່ທະນາຄານແຫ່ງ ສປປ ລາວ (ທຫລ), ໄດ້ຈັດກອງປະຊຸມປຶກສາຫາລືປະກອບຄຳຄິດຄຳເຫັນກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານໃນຂົງເຂດທະນາຄານ ໂດຍສະເພາະການຈັດຕັ້ງປະຕິບັດແຜນເງິນຕາ, ການຈັດຕັ້ງປະຕິບັດບັນດານິຕິກຳ, ກໍຄືມາດຕະການແກ້ໄຂບັນຫາເຄັ່ງຮ້ອນຂອງ ເສດຖະກິດ - ການເງິນ ເວົ້າລວມ, ເວົ້າສະເພາະ ກໍຄືບັນຫາເງິນເຟີ້, ອັດຕາແລກປ່ຽນ ແລະ ບາງວຽກງານທີ່ຕິດພັນກັບຂະແໜງທະນາຄານລວມທັງທິດທາງແກ້ໄຂ, ໄລຍະກາງ ແລະ ໄລຍະຍາວໃນຕໍ່ໜ້າຂຶ້ນ, ໂດຍການເປັນປະທານຮ່ວມໂດຍທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ (ທຫລ) ແລະ ທ່ານ ອາລຸນໄຊ ສູນນະລາດ ລັດຖະມົນຕີ, ຫົວໜ້າຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ (ຫສນຍ), ຄະນະສະເພາະກິດ 19/ກມສພ,ທັງເປັນຫົວໜ້າກອງເລຂາຄະນະສະເພາະກິດພ້ອມດ້ວຍຄະນະ, ມີບັນດາກະຊວງກ່ຽວຂ້ອງ, ຄະນະກົມ ແລະ ພະນັກງານພາຍໃນ ທຫລ ເຂົ້າຮ່ວມ.

ໃນໂອກາດນີ້ ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ໄດ້ລາຍງານຄວາມຄືບໜ້າຜົນການຈັດຕັ້ງປະຕິບັດແຜນການ ເຄື່ອນໄຫວວຽກງານຈຸດສຸມຂອງຄະນະສະເພາະກິດ 19/ກມສພ, ເລກທີ 01/ນຍ ລົງວັນທີ 18 ກໍລະກົດ 2023 ທີ່ຕິດພັນກັບພາລະບົດບາດຂອງ ທຫລ ໂດຍສະເພາະມາດຕະການແກ້ໄຂເງິນເຟີ້, ການແກ້ໄຂອັດຕາແລກປ່ຽນ, ການຄຸ້ມຄອງເງິນຕ່າງປະເທດ ແລະໄດ້ຕີລາຄາການຈັດຕັ້ງປະຕິບັດວຽກງານໃນໄລຍະ 3 ເດືອນຜ່ານມາ ດ້ານດີ - ຂໍ້ຄົງຄ້າງ, ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງມາດຕະການໃນຕໍ່ໜ້າ; ຄວາມຄືບໜ້າການຈັດຕັ້ງປະຕິບັດຂໍ້ຕົກລົງເລກທີ 93/

ນຍ ວ່າດ້ວຍການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອ ເພື່ອກະຈາຍແຫຼງທຶນລົງສູ່ທ້ອງຖິ່ນ. ຈາກນັ້ນ, ທ່ານ ອາລຸນໄຊ ສູນນະລາດ ລັດຖະມົນຕີ ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ຫສນຍ) ໄດ້ມີຄຳຄິດເຫັນຕໍ່ກັບເນື້ອໃນລວມ, ຂໍ້ຄົງຄ້າງທີ່ມີຕໍ່ຂະແໜງທະນາຄານແມ່ນຈະຕ້ອງສຸມໃສ່ວຽກງານ ໂດຍສະເພາະແມ່ນເຄື່ອງມືກົນໄກນະໂຍບາຍທີ່ນຳໃຊ້ປະຈຸບັນອັນໃດທີ່ມີຜົນໄດ້ຮັບກໍສືບຕໍ່ໄປ, ອັນໃດທີ່ບໍ່ສອດຄ່ອງກໍໃຫ້ປັບປຸງ ບົນພື້ນຖານຕ້ອງຍຶດໝັ້ນຜົນການຄົ້ນຄວ້າດ້ານວິຊາການຂອງຂະແໜງທະນາຄານ, ປະເມີນຄວາມຄືບໜ້າຂອງວຽກງານຂອງຂະແໜງທະນາຄານໃນຈຳນວນ 91 ໜ້າວຽກຮັບຜິດຊອບທີ່ໄດ້ກຳນົດຢູ່ໃນການດຳເນີນງານຂອງຄະນະສະເພາະກິດ 19/ກມສພ ໂດຍສ້າງບັນຊີກວດກາຄວາມຄືບໜ້າຂອງບັນດາວຽກງານດັ່ງກ່າວໃຫ້ລະອຽດ ແລະ ຈັດຕັ້ງປະຕິບັດໃຫ້ສຳເລັດແລ້ວໃຫ້ຄົ້ນຄວ້າມີຄຳເຫັນດ້ານວິຊາການ ໂດຍສະເພາະວຽກງານທີ່ພົ້ນເດັ່ນໃນຂະແໜງທະນາຄານລາຍງານຄະນະສະເພາະກິດ,ເພື່ອຈັດຕັ້ງປະຕິບັດແຜນການໃຫ້ສຳເລັດ.

ກອງປະຊຸມດຳເນີນເປັນເວລາເຄິ່ງວັນດ້ວຍບັນຍາກາດອັນຟົດຟື້ນ, ໂດຍມີການປຶກສາຫາລືແລກປ່ຽນຄຳຄິດຄຳເຫັນ, ເຊິ່ງໄດ້ປິດລົງດ້ວຍຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.



**ຂ່າວ-ພາບ: ແຂກ ມູນລະໄມ**

*ຢູ່ເມືອງລາວໃຊ້ເງິນກີບລາວ*